ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ BANK OF THE LAO PDR
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ຮັກສາການຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕ້ອນຮັບຜູ້ອຳນວຍການ ADB ປະຈຳ ສປປ ລາວ



ໃນຕອນເຊົ້າຂອງວັນທີ 16 ຕຸລາ 2024, ທີ່ ທະນາຄານແຫ່ງ ສປປ ລາວ, ທ່ານ ນາງ ວັດທະນາ ດາລາລອຍ ຮັກສາການ ຜູ້ວ່າການ ທຫລ ພ້ອມດ້ວຍຄະນະຈາກກົມກ່ຽວຂ້ອງຂອງ ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ Sonomi Tanaka, ຜູ້ອຳນວຍການທະນາຄານພັດທະນາອາຊີ (Asian Development Bank: ADB) ປະຈຳ ສປປ ລາວ ພ້ອມດ້ວຍຄະນະ. ຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບຄັ້ງນີ້ແມ່ນກ່າວອຳລາໃນໂອກາດທີ່ຄົບວາລະປະຈຳການຢູ່ ສປປ ລາວ ແລະ ແນະນຳຜູ້ອຳນວຍການຄົນໃໝ່. ໃນໂອກາດນີ້, ທ່ານຜູ້ອຳນວຍການ ADB ປະຈຳ ສປປ ລາວ ໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານ ສປປ ລາວ ກໍ່ຄື ທຫລ ທີ່ໃຫ້ການສະໜັບສະໜູນຜູ້ກ່ຽວດ້ວຍດີຕະຫຼອດມາ ໃນໄລຍະທີ່ໄດ້ປະຈຳການຢູ່ ສປປ ລາວ. ການຢ້ຽມຂໍ່ານັບໃນຄັ້ງນີ້, ທ່ານ ຮັກສາການ ຜູ້ວ່າການ ທຫລ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຂອບໃຈ ທ່ານ ນ. Sonomi Tanaka ທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນທາງດ້ານວິຊາການແກ່ ທຫລ ແລະ ຫວັງຢ່າງວ່າຈະໄດ້ຮັບການສືບຕໍ່ຊ່ວຍເຫຼືອຈາກ ADB ຕື່ມໃນອານາຄົດ.

**# ຂ່າວ: ກົມຮ່ວມມືສາກົນ.**

**# ພາບ: ຫ້ອງການທະນາຄານແຫ່ງ ສປປ ລາວ.**

**ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ**